ຫຼັງຈາກທີ່ໄດ້ເຂົ້າໄປອ່ານບົດຂຽນຂອງຕາວັນ ຈຶ່ງວ່າກ່ຽວກັບຜູ້ຊາຍມັກແຕ່ຍິງສວຍໆງາມໆ ສ່ວນຜູ້ທີ່ບໍ່ງາມປານໃດແລ້ຍຕົກກະປ໋ອງ ວ່າຊ້ານ!  ທີ່ຈິງມັນບໍ່ເປັນແນວນັ້ນດອກ ເພາະເຣື່ອງ ຄວາມຮັກທີ່ແທ້ຈິງມັນຕ້ອງເກີດຂຶ້ນຈາກ ໃຈສອງໃຈມັນສອດຄ່ອງເຂົ້າຫາກັນ ແລະ ນິສັຍໃຈຄໍຂອງ ຜູ່ຍິງຄົນນັ້ນເປັນທີ່ຮັກທີ່ຊອບຂອງຜູ້ຊາຍຄົນນັ້ນເຊັ່ນກັນ.  ຄວາມງາມເຖິງຈະມີສ່ວນ ກໍເປັນພຽງແຕ່ ເລັກນ້ອຍເທົ່ານັ້ນ.... ນີ້ແມ່ນເວົ້າຈາກມູນໜຶ່ງຂອງລູກຜູ້ຊາຍທີ່ເຄີຍເຫັນແລະປະສົບພົບມາ.

ເນື່ອງຈາກສາວຫຼັກເຈັດໄດ້ບອກວ່າ ສາວຕາວັນແມ່ນຮຸ່ນຮາວຄາວດຽວກັບສາວຫຼັກເຈັດ, ຂ້ອຍເອງຈຶ່ງຂໍຮຽກຕົວເອງໃນຄຳກອນຂ້າງລຸ່ມນີ້ ວ່າ "ອ້າຍ" ແລະ ຮ້ອງຕາວັນວ່າ "ນ້ອງ". ຖ້າແມ່ນຕາວັນແກ່ກວ່າສາວຫຼັກເຈັດແລ້ວຂ້ອຍກໍຈະຮ້ອງວ່າ "ເອື້ອຍ" ກໍແລ້ວກັນ....

| | |
|---|---|
| ອ່ານຂໍ້ຄວາມທຸກດ້ານ | ຕາວັນເລົ່າຄວາມຈິງ |
| ວ່າຜູ່ຍິງທີ່ສວຍງາມ | ຈຶ່ງຄ່ອຍມີຊາຍຕ້ອມ |
| ຊາຍມັກຫອມຕອມຕຸ້ມ | ຊຸມແຕ່ສາວຜູ່ງາມຄອ່ງ  ເທົ່ານັ້ນ |
| ສາວຜູ່ຮ້າຍເຂົາບໍ່ມອງ | ໜມອງຫົວໃຈບໍ່ແລ້ວ |
| | ມັນເປັນແປ້ວຢູ່ໃຈ   ວ່າຊັ້ນ |

| | |
|---|---|
| ແຕ່ວ່າແນວຄິດອ້າຍ | ມັນບໍ່ແມ່ນຄວາມຈິງ      ດອກເດີ |
| ຍິງທີ່ຊາຍເຂົາຝັນ | ສິ່ງສຳຄັນມີຫຼາຍດ້ານ |
| ໜຶ່ງກໍຄືການໃຫ້ | ຄວາມຈິງໃຈເປັນທີ່ໜຶ່ງ |
| ຄວາມຮັກຫວານຊາບຊຶ້ງ | ຕຣຶງແໜ້ນຕ້ອງແມ່ນ (ໃຈ) |

| | |
|---|---|
| ສອງນັ້ນຄືການໄດ້ | ເຫັນແກ່ (ຄວາມສັມພັນ) |
| ມີຈິດໃຈກົງກັນ | ໝັ້ນຍົກສູງທັງສອງກ້ຳ |
| ແມ່ນຈະງາມຫຼືຂີ້ຮ້າຍ | ຮັກສາໃຈກັນໃຫ້ຢູ່ |
| ຖ້າຈິງໃຈໝາຍເປັນຄູ່ | ດູແລໃຈຮັກໝັ້ນ |
| | ສຳຄັນແທ້ກວ່າສູ່ແນວ |

| | |
|---|---|
| ມີສອງຢ່າງຍັງບໍ່ແລ້ວ | ເມື່ອມີຮັກຕ້ອງມີຫວງ |
| (ຄວາມຫ່ວງໄຍ)ໃຈກັນ | ໝັ່ນຖນອມຫອມໄວ້ |
| ມີອັນໃດໃຫ້ຊູຊ້ວານ | ໃຫ້ສົມຄວນຖ້ວນຖີ່ |
| ຄວາມຫວັງດີຮອບດ້ານ | ຮັກຫວານຊື່ນບໍ່ຈາງ |

ສີ່ຕ້ອງມີຈຸດຕັ້ງ　　ໃຫ້ສົມດັ່ງສັຕຣີລາວ
(ໃຈຜ່ອງຂາວສວຍງາມ)　　ໃຫ້ຄົບ*ສາມເຮືອນ* ແທ້
ບໍ່ວໍແວໃຈດີ້　　ຍຶດຖືທັມ*ນ້ຳສີ່*
ສົມເປັນກຸລສັຕຣີ　　ນີ້ຄືຍິງທ່ຽງແທ້
　　ບໍ່ແວເວີ້ແຄິ່ງຄອງ

ຕະວັນເອີຍ.... ເປັນແນວໃດລະນ້ອງ　　ຄົບທຸກຢ່າງຄືຄຶດ　ຢູ່ບໍ?
ຢ່າໄດ້ອຶດທາງນ້ຳໃຈ　　ກໍໃຫ້ມີດີດ້ວຍ
ຈະຮວຍຈົນບໍ່ສົນນ້ອງ　　ໄປຕາມຄອງລ່ອງຕາມຮອ່ມ
ຈະຜູ້ຮ້າຍຫຼືງາມ　　ບໍ່ສຳຄັນ　ເຊື່ອອ້າຍ
　　ຊາຍຫມາຍຊ້ອນຍ້ອນນ້ຳໃຈ

ຂໍນຳ... ຢ່າເປັນຍິງຂີ້ຮ້າຍ　　ແຖມຍັງຕື່ມຕົດເຫມັນ
ເປັນຜູ່ຍິງມີບໍ່ມີສັຈ　　ຫນ້າບູດຕຶງຂຶງກ້າມ
ທັງບໍ່ງາມທັງສຽງຫ້ວນ　　ບໍ່ຊອນຟັງເວົ້າບໍ່ມ່ວນ
ຍິງນັ້ນ... ໃຜກໍບໍ່ປາກວົນ　　ບໍ່ສົນໃຈຢາກຮູ້ຊ້ຳ　ຢູ່ຕຳຫນ້າ ອ້າຍບໍ່ຖາມ

ຕະວັນ... ອ້າຍຈະຂໍບອກຢ້ຳ　　ງາມທີ່ຫນື່ງ　ຄືຫົວໃຈ
ສອງຖັດໄປ ຄວາມສັມພັນ　　ກ່ຽວຂ້ອງກັນພັນບ້ວງ
ສາມຄືຫວງຫາວໄວ້　　ຄວາມຈິງໃຈ ໃຫ້ເປັນຫ່ວງ
ສີ່ອ້າຍຢາກລຸລ່ວງ　　ເປັນຫ່ວງນຳຈຶ່ງເວົ້າ　　ຍິງລາວນັ້ນໃຫ້ຍຶດຖື.....ຈິງແລ້ວ